www.amnesty.org

ຖະແຫຼງການຮ່ວມ ໂດຍ ອົງການເອັມເນສຕີ້ ອິນເຕີເນຊັ່ນນອລ (AMNESTY INTERNATIONAL)

26/05/2023 ເລກທີ: ASA 26/6830/2023

# ປະເທດໄທ/ລາວ: ສືບສວນການສັງຫານຜູ້ລີ້ໄພຄົນລາວ ແລະ ຍຸຕິການປາບປາມຂ້າມຊາດຕໍ່ນັກປົກປ້ອງສິດທິມະນຸດ

ເນື່ອງຈາກການລາຍງານຂ່າວໃນວັນທີ 17 ພຶດສະພາ 2023 ກ່ຽວກັບການຍິງສັງຫານ ບຸນສ່ວນ ກິດຕິຍາໂນ, ນັກປົກປ້ອງສິດທິມະນຸດຄົນລາວ ອາຍຸ 56 ປີ ແລະ ເປັນຜູ້ທີ່ໄດ້ຮັບສະຖານະຜູ້ລີ້ໄພຈາກສໍານັກງານຂ້າຫຼວງໃຫຍ່ສະຫະປະຊາຊາດສໍາລັບຜູ້ລີ້ໄພ (The United Nations High Commissioner for Refugees ຫຼື UNHCR), ຢູ່ພື້ນທີ່ຊາຍແດນທາງພາກຕາເວັນອອກສ່ຽງເໜືອຂອງປະເທດໄທ, ພວກເຮົາທັງສິບໜ່ວຍງານທີ່ໄດ້ລົງນາມໃນຖະແຫຼງການສະບັບນີ້ ຮຽກຮ້ອງໃຫ້ລັດຖະບານໄທດໍາເນີນການສືບສວນຢ່າງເປັນເອກະລາດ, ມີປະສິດທິພາບ ແລະ ວ່ອງໄວຕໍ່ເຫດການຄັ້ງນີ້ ແລະ ໃຫ້ມີການຊົດເຊີຍທີ່ເໝາະສົມແກ່ຄອບຄົວ ແລະ ບຸກຄົນທີ່ເປັນທີ່ຮັກຂອງຜູ້ເຄາະຮ້າຍ. ພວກເຮົາຍັງຮຽກຮ້ອງໃຫ້ທັງລັດຖະບານລາວ ແລະ ໄທ ຮ່ວມກັນກັບປະຊາຄົມການທູດໃນປະເທດລາວ ແລະ ໄທ ແລະ ໜ່ວຍງານພາຍໃຕ້ອົງການສະຫະປະຊາຊາດໃຫ້ແກ້ໄຂບັນຫາການລະເມີດດ້ານສິດທິມະນຸດ ທີ່ເກີດຂຶ້ນກັບນັກປົກປ້ອງສິດທິມະນຸດຄົນລາວ ທີ່ຢູ່ລະຫວ່າງການຂໍລີ້ໄພໃນປະເທດໄທ.

## ການສັງຫານ ບຸນສ່ວນ ກິດຕິຍາໂນ

ວັນທີ 17 ພຶດສະພາ 2023, ເຈົ້າໜ້າທີ່ໄທໄດ້ພົບເຫັນສົບຂອງ ບຸນສ່ວນ ຢູ່ເມືອງໂພໄຊ, ແຂວງອຸບົນຣາຊະທານີ ທາງພາກຕາເວັນອອກສຽງເໜືອຂອງປະເທດໄທ ເຊິ່ງມີຊາຍແດນຕິດກັບປະເທດລາວ. ບຸນສ່ວນເປັນສະມາຊິກຂອງ "ກຸ່ມລາວເສລີ (Free Laos)" ທີ່ຕັ້ງຢູ່ໃນປະເທດໄທ, ເຊິ່ງເປັນເຄືອຂ່າຍແຮງງານລາວ ແລະ ນັກປົກປ້ອງສິດທິມະນຸດຂອງລາວ, ເຊິ່ງໄດ້ເຂົ້າຮ່ວມກິດຈະກໍາຕ່າງໆ ລວມທັງການປະທ້ວງໂດຍສັນຕິຢູ່ສະຖານທູດລາວ ປະຈໍາບາງກອກ ແລະ ສໍາມະນາກ່ຽວກັບອົງການສິດທິມະນຸດໃນຫົວຂໍ້ຕ່າງໆ ລວມທັງສິດທິມະນຸດ, ສິດທິດ້ານສິ່ງແວດລ້ອມ, ການຕ້ານການສໍ້ລາດບັງຫຼວງ ແລະ ປະຊາທິປະໄຕ. ຕາມການລາຍງານຂອງສື່ມວນຊົນ, ລາວໄດ້ຖືກຍິງສາມຄັ້ງ ໃນຂະນະທີ່ລາວກໍາລັງຂີ່ລົດຈັກ[1]. ເຖິງແມ່ນວ່າອົງການທີ່ລົງນາມຍັງບໍ່ມີຂໍ້ມູນວ່າໃຜເປັນຜູ້ລົງມືສັງຫານຄັ້ງນີ້, ພວກເຮົາກວດສອບໄດ້ວ່າ ນັກປົກປ້ອງສິດທິ

[1] ໄທລັດ, สลดหนุ่มใหญ่ นักเคลื่อนไหวชาวลาว ถูกยิงตายที่อุบลฯ คาดตามฆ่าล้างแค้น, 19 ພຶດສະພາ 2023, https://www.thairath.co.th/news/crime/2695135

ມະນຸດຄົນດັ່ງກ່າວໄດ້ຫຼົບໜີຈາກການປະຫັດປະຫານຈາກປະເທດລາວ ແລະ ໄດ້ອາໄສຢູ່ໃນປະເທດໄທເປັນເວລາຫຼາຍປີແລ້ວ. ອີງຕາມການລາຍງານຂອງສື່ມວນຊົນ, ບຸນສ່ວນແມ່ນຢູ່ໃນຂັ້ນຕອນຂອງການເຮັດເລື່ອງຮ້ອງຂໍລີ້ໄພໄປຢູ່ປະເທດອົດສະຕາລີ[2].

ບຸກຄົນທີ່ມີສ່ວນກ່ຽວຂ້ອງກັບກຸ່ມລາວເສລີຕ່າງກໍເຄີຍຖືກຄວບຄຸມຕົວຕາມອຳເພີໃຈ ແລະ ຕົກເປັນເຫຍື່ອຂອງການອຸ້ມຫາຍທັງໃນປະເທດລາວ ແລະ ໄທ.

## ການປາບປາມພາຍໃນປະເທດ ແລະ ຕ່າງປະເທດ

ບັນດາອົງການທີ່ລົງນາມໃນຖະແຫຼງການໄດ້ສັງເກດເຫັນການຕັ້ງເປົ້າໝາຍໄປຫານັກປົກປ້ອງສິດທິມະນຸດທີ່ພົວພັນກັບກຸ່ມລາວເສລີຫຼາຍຄັ້ງ. ການຍິງສັງຫານ ບຸນສ່ວນ ເກີດຂຶ້ນພຽງໜຶ່ງເດືອນຫຼັງຈາກນັ້ນໄດ້ມີການຈັບກຸມ ແລະ ຄວບຄຸມຕົວ ທ້າວ ສະຫວ່າງ ພະເລີດ ສະມາຊິກຂອງກຸ່ມລາວອິດເສລີອີກຄົນໜຶ່ງ ທີ່ອາໄສຢູ່ນະຄອນຫຼວງບາງກອກ. ເຊິ່ງໄດ້ມີລາຍງານວ່າ: ໃນວັນທີ 20 ເມສາ 2023, ທ້າວ ສະຫວ່າງ ໄດ້ກັບໄປຢາມບ້ານຢູ່ ບ້ານ ດອນສະອາດ, ເມືອງ ສອງຄອນ, ແຂວງ ສະຫວັນນະເຂດ, ປະເທດລາວ, ເຊິ່ງເປັນເຫດໃຫ້ຜູ້ກ່ຽວຖືກເຈົ້າໜ້າທີ່ຕຳຫຼວດຈາກໜ່ວຍງານທີ່ບໍ່ສາມາດລະບຸໄດ້ຈັບກຸມ[3]. ປະຈຸບັນນີ້, ລາວຍັງຄົງຖືກຄວບຄຸມຕົວໂດຍບໍ່ສາມາດຕິດຕໍ່ກັບໂລກພາຍນອກໄດ້. ຕາມຂໍ້ມູນຈາກຜູ້ລົງນາມຖະແຫຼງການ, ຕຳຫຼວດບໍ່ໄດ້ແຈ້ງໃຫ້ຍາດພີ່ນ້ອງຂອງລາວຮັບຮູ້ກ່ຽວກັບຂໍ້ກ່າວຫາທີ່ລາວຖືກຈັບ ແລະ ບໍ່ອະນຸຍາດໃຫ້ຄອບຄົວເຂົ້າຢ້ຽມຢາມ.

ໃນວັນທີ 26 ສິງຫາ 2019, ທ້າວ ອ໊ອດ ໄຊຍະວົງ, ນັກປົກປ້ອງສິດທິມະນຸດຜູ້ມີຊື່ສຽງ ໄດ້ຫາຍຕົວໄປຈາກເຮືອນຂອງລາວຢູ່ນະຄອນຫຼວງບາງກອກ ພາຍຫຼັງທີ່ລາວພ້ອມກັບສະມາຊິກກຸ່ມລາວເສລີ, ທ້າວ ເພັດພູທອນ ພິລາຈັນ ໄດ້ຮ່ວມປະຊຸມກັບຜູ້ລາຍງານພິເສດຂອງອົງການສະຫະປະຊາຊາດ ວ່າດ້ວຍຄວາມທຸກຍາກຂັ້ນຮຸນແຮງ ແລະ ສິດທິມະນຸດ.[4] ທ້າວ ອ໊ອດ ຍັງມີບົດບາດເປັນແກນນຳໃນການນຳພາຂະບວນປະທ້ວງຢູ່ບາງກອກໃນວັນທີ 16 ກໍລະກົດ 2019 ເພື່ອຮຽກຮ້ອງໃຫ້ປ່ອຍຕົວສະມາຊິກຂອງກຸ່ມລາວອິດສະຫຼະຄົນອື່ນໆທີ່ຖືກຄວບຄຸມຕົວຢູ່ປະເທດລາວ ແລະ ການປົກປັກຮັກສາສິ່ງແວດລ້ອມ ແລະ ຜືນແຜ່ນດິນໃນປະເທດຂອງຕົນ.[5] ໃນກໍລະດັ່ງກ່າວ, ທາງການໄທບໍ່ສາມາດດຳເນີນສືບສວນໄດ້ຢ່າງວ່ອງໄວ, ຍຸຕິທຳ ແລະ ມີປະສິດທິຜົນໄດ້ໃນຄະດີການຫາຍຕົວທີ່ຖືກກ່າວຫານີ້, ເຖິງວ່າຈະມີການຮຽກຮ້ອງຢ່າງຕໍ່ເນື່ອງຈາກອົງການສະຫະປະຊາຊາດ ແລະ ອົງການສັງຄົມພົນລະເຮືອນກໍຕາມ.[6]

---

2 ຂ່າວສົດ ພາສາອັງກິດ, Thai Police: A Lao activist's relatives may murder him, 21 ພຶດສະພາ 2023, khaosodenglish.com/news/2023/05/21/thai-police-a-lao-activists-relatives-may-murder-him/

3 ວິທະຍຸເອເຊຍເສລີ, "Thailand-based rights activist arrested in Laos after returning to home village" 9 ພຶດສະພາ 2023, rfa.org/english/news/laos/activist-returns-arrest-05092023164548.html

4 ສຳນັກງານຂ້າຫຼວງໃຫຍ່ສຳລັບສິດທິມະນຸດແຫ່ງສະຫະປະຊາຊາດ, "Thailand/Lao PDR: UN experts concerned by disappearance of Lao human rights defender" 1 ຕຸລາ 2019, ohchr.org/en/press-releases/2019/10/thailandlao-pdr-un-experts-concerned-disappearance-lao-human-rights-defender

5 ສຳນັກງານຂ້າຫຼວງໃຫຍ່ສຳລັບສິດທິມະນຸດແຫ່ງສະຫະປະຊາຊາດ, Letter to the Governments of Load and Thailand (UA LAO 2/2019), 25 ກັນຍາ, 2019, spcommreports.ohchr.org/TMResultsBase/DownLoadPublicCommunicationFile?gId=24867

6 ບາງຕົວຢ່າງກ່ຽວກັບການຮຽກຮ້ອງ ສາມາດອ່ານເພີ່ມເຕີມໄດ້ທີ່ amnesty.or.th/en/latest/news/7581/ fidh.org/en/region/asia/thailand/investigate-disappearance-of-lao-activist-seeking-asylum and hrw.org/news/2019/09/07/thailand-lao-refugee-feared-disappeared

ສາມເດືອນຕໍ່ມາ, ທ້າວ ເພັດພູທອນ, ສະມາຊິກຂອງກຸ່ມລາວອິດເສລີອີກຄົນໜຶ່ງ ທີ່ເຄີຍເປັນເພື່ອນຮ່ວມບ້ານກັບ ທ້າວ ອ໊ອດ, ກໍໄດ້ຫາຍຕົວໄປເຊັ່ນກັນ ພາຍຫຼັງທີ່ລາວໄດ້ອອກຈາກນະຄອນຫຼວງບາງກອກໄປຢາມຄອບຄົວຢູ່ນະຄອນຫຼວງວຽງຈັນ.[7] ມາຮອດປະຈຸບັນນີ້, ຍັງບໍ່ມີໃຜຮູ້ເຖິງຊະຕາກຳ ແລະ ທີ່ຢູ່ຂອງລາວ.

ກ່ອນໜ້ານີ້, ວັນທີ 5 ມີນາ 2016, ນັກປົກປ້ອງສິດທິມະນຸດ 3 ຄົນຈາກກຸ່ມດຽວກັນຄື: ສົມພອນ ພິມມະສອນ, ສຸກັນ ໄຊທັດ ແລະ ລອດຄຳ ທຳມະວົງ ໄດ້ຖືກທາງການລາວຈັບກຸມ ແລະ ຄວບຄຸມຕົວ ໂດຍບໍ່ໃຫ້ຕິດຕໍ່ກັບໂລກພາຍນອກ ຍ້ອນການວິພາກວິຈານລັດຖະບານລາວທາງອິນເຕີເນັດ ແລະ ການເຂົ້າຮ່ວມໃນການປະທ້ວງໂດຍສັນຕິຕໍ່ໜ້າສະຖານທູດລາວ ປະຈຳນະຄອນຫຼວງບາງກອກ. ໃນວັນທີ 22 ມີນາ 2017, ສານປະຊາຊົນນະຄອນຫຼວງວຽງຈັນ ໄດ້ຕັດສິນວ່າພວກເຂົາກະທຳຜິດໃນມາດຕາ 56 (ການທໍລະຍົດຕໍ່ປະເທດຊາດ), ມາດຕາ 65 (ໂຄສະນາຊວນເຊື່ອເພື່ອຕໍ່ຕ້ານລັດ) ແລະ ມາດຕາ 72 (ການໂຮມຊຸມນຸມເພື່ອສ້າງຄວາມບໍ່ສະຫງົບໃນສັງຄົມ) ຕາມປະມວນກົດໝາຍອາຍາຂອງລາວ. ພວກເຂົາໄດ້ຖືກຕັດສິນໂທດຈຳຄຸກ 20, 16 ແລະ 12 ປີ ຕາມລຳດັບ.

ຂໍ້ກ່າວຫາຢ່າງຕໍ່ເນື່ອງກ່ຽວກັບການຈັບກຸມ, ຄວບຄຸມຕົວ, ການຕັດສິນໂທດວ່າມີຄວາມຜິດ ແລະ ການຫາຍຕົວໄປຂອງສະມາຊິກກຸ່ມລາວເສລີ ຊີ້ບອກໃຫ້ເຫັນວ່າ ສິ່ງທີ່ປະກົດວ່າເປັນການໂຈມຕີແບບມີເປົ້າໝາຍ ບໍ່ພຽງແຕ່ເກີດຂຶ້ນຢູ່ໃນດິນແດນຂອງປະເທດລາວເທົ່ານັ້ນ. ແຕ່ເບິ່ງຄືວ່າມັນເປັນສ່ວນໜຶ່ງຂອງຮູບແບບການປາບປາມຂ້າມຊາດຢ່າງຕໍ່ເນື່ອງທີ່ມຸ່ງເປົ້າໄປທີ່ນັກເຄື່ອນໄຫວ ແລະ ນັກປົກປ້ອງສິດທິມະນຸດ ທີ່ຫຼົບໜີການປະຫັດປະຫານຈາກປະເທດລາວໄປປະເທດໄທ ການປາບປາມໃນລັກສະນະນີ້ແມ່ນເພື່ອປິດງຽບການເຄື່ອນໄຫວກິດຈະກຳດ້ານສິດທິມະນຸດ ລວມທັງສິດທິເສລີພາບໃນການຊຸມນຸມໂດຍສັນຕິ ແລະ ເສລີພາບໃນການສະແດງຄຳຄິດຄຳເຫັນຕ່າງທີ່ສັນຕິ.

ໃນສະພາບການດັ່ງກ່າວ, ວັນທີ 11 ທັນວາ 2020, ຜູ້ຊ່ຽວຊານອິດສະຫຼະ 8 ທ່ານ ຂອງສະພາສິດທິມະນຸດຂອງອົງການສະຫະປະຊາຊາດ ໄດ້ຍື່ນຈົດໝາຍເຖິງລັດຖະບານລາວ ແລະ ໄທ ເພື່ອສະແດງຄວາມວິຕົກກັງວົນກ່ຽວກັບ "ຮູບແບບການການຫາຍຕົວ" ກັບ "ປະເທດໃນພາກພື້ນປະສານສົມທົບ, ຊ່ວຍເຫຼືອ ຫຼື ຮູ້ເຫັນເປັນໃຈໃນການລັກພາຕົວຂ້າມແດນຈົນນຳໄປສູ່ການຫາຍຕົວຂອງນັກເຄື່ອນໄຫວກິດຈະກຳທາງການເມືອງ."[8] ຈົດໝາຍຍັງຊີ້ແຈ້ງວ່າ ໃນປີ 2018 ກະຊວງການຕ່າງປະເທດລາວ ແລະ ໄທ ໄດ້ອອກຖະແຫຼງການຮ່ວມ ວ່າດ້ວຍການເພີ່ມທະວີການຮ່ວມມືເພື່ອ "ຍຶດໝັ້ນນະໂຍບາຍບໍ່ອະນຸຍາດໃຫ້ບຸກຄົນ ຫຼື ກຸ່ມຄົນໃດໜຶ່ງ ວາງແຜນການກໍ່ຄວາມບໍ່ສະຫງົບ ຫຼື ດຳເນີນການເຄື່ອນໄຫວຕໍ່ຕ້ານລັດຖະບານໃນປະເທດອື່ນ ເຊິ່ງເປັນດິນແດນຂອງຕົນ."

ອີງຕາມຄຳໃຫ້ການທີ່ອົງການຈັດຕັ້ງທີ່ລົງນາມຮອບຮວມໄດ້, ການບໍ່ຕ້ອງຮັບໂທດສຳລັບຄະດີທີ່ລະບຸໄວ້ຂ້າງເທິງນັ້ນ ໄດ້ເຮັດໃຫ້ເກີດມີບັນຍາກາດທີ່ໜ້າຢ້ານກົວຢ່າງກວ້າງຂວາງ ໃນບັນດານັກປົກປ້ອງສິດທິມະນຸດຄົນລາວ. ພາຍໃຕ້ສະພາບແວດລ້ອມທີ່ເຄັ່ງຕຶງນີ້, ບັນດານັກປົກປ້ອງສິດທິມະນຸດທີ່ຫຼົບໜີອອກຈາກປະເທດຂອງຕົນ ຍັງຄົງຕ້ອງໃຊ້ຊີວິດຢູ່ພາຍໃຕ້ຄວາມຢ້ານກົວວ່າ ຈະຕົກເປັນເປົ້າໝາຍຈາກການໃຊ້ສິດທິມະນຸດຂອງຕົນ.

## ພັນທະຂອງລັດພາຍໃຕ້ກົດໝາຍສິດທິມະນຸດສາກົນ

[7] ວິທະຍຸເອເຊຍເສລີ, "Lao Migrant Goes Missing, Friends Suspect Government Abduction" 9 ທັນວາ 2019, rfa.org/english/news/laos/phetphouthon-philachane-12092019161409.html

[8] ສຳນັກງານຂ້າຫຼວງໃຫຍ່ສຳລັບສິດທິມະນຸດແຫ່ງສະຫະປະຊາຊາດ, ຈົດໝາຍເຖິງລັດຖະບານປະເທດລາວ ແລະ ປະເທດໄທ (AL LAO 4/2020), 11 ທັນວາ 2020, spcommreports.ohchr.org/TMResultsBase/DownLoadPublicCommunicationFile?gId=25648

ປະເທດໄທ ແລະ ປະເທດລາວ ແມ່ນເປັນລັດພາຄີຂອງສົນທິສັນຍາສາກົນ ວ່າດ້ວຍສິດທິພົນລະເຮືອນ ແລະ ສິດທິດ້ານການເມືອງ (International Covenant on Civil and Political Rights ຫຼື ICCPR) ເຊິ່ງພວກເຂົາຕ້ອງເຄົາລົບ ແລະ ຮັບປະກັນສິດທິໃນການໃຊ້ຊີວິດ, ເສລີພາບ ແລະ ຄວາມປອດໄພຂອງບຸກຄົນ, ເສລີພາບຈາກການທໍລະມານ ແລະ ການປະຕິບັດ ແລະ ການລົງໂທດທີ່ໂຫດຮ້າຍ, ໄຮ້ມະນຸດສະທຳ ຫຼື ທຳລາຍກຽດສັກສີຕ່າງໆ ແລະ ເສລີພາບໃນການສະແດງອອກ, ການຮວມຕົວ ແລະ ການຊຸມນຸມໂດຍສັນຕິ ແລະ ສິດໃນການມີສ່ວນຮ່ວມສາທາລະນາກ່ຽວກັບສິດທິອື່ນໆອີກດ້ວຍ. ການອຸ້ມຫາຍຖືເປັນການລະເມີດຂໍ້ກຳນົດຫຼາຍຂໍ້ໃນ ICCPR. ພວກເຂົາມີໜ້າທີ່ໃນການສືບສວນຢ່າງທັນການ, ມີປະສິດທິຜົນ ແລະ ລະອຽດຖີ່ຖ້ວນ ດ້ວຍຄວາມເປັນເອກະລາດ, ຍຸຕິທຳ ແລະ ໂປ່ງໃສ ແລະ ດຳເນີນຄະດີໃນກໍລະນີທີ່ມີການພາກຊີວິດແບບຜິດກົດໝາຍ, ລວມທັງການອຸ້ມຫາຍ, ຕາມມາດຕະຖານສາກົນທີ່ກ່ຽວຂ້ອງເຊັ່ນ: ອະນຸສັນຍາມິນີໂຊຕາວ່າດ້ວຍການສືບສວນກໍລະນີສົງໄສວ່າເປັນການເສຍຊີວິດທີ່ບໍ່ຊອບທຳທາງກົດໝາຍ.[9] ລັດຍັງຕ້ອງສະໜອງການເຂົ້າເຖິງການຟື້ນຟູ ແລະ ການຊົດເຊີຍທີ່ມີປະສິດທະພາບ ເພື່ອແກ້ໄຂຕໍ່ການລະເມີດສິດທິມະນຸດພາຍໃຕ້ສິດອຳນາດຂອງຕົນ.

ການປົກປ້ອງສິດດັ່ງກ່າວຍັງຄຸ້ມຄອງນັກປົກປ້ອງສິດທິມະນຸດທີ່ປະເຊີນກັບຄວາມສ່ຽງໃນການຕົກເປັນເປົ້າໝາຍຂອງຄວາມຮຸນແຮງຫຼາຍຂຶ້ນ ຍ້ອນວຽກງານດ້ານສິດທິມະນຸດອັນຊອບທຳຂອງພວກເຂົາ.

ໃນໄລຍະຮອບວຽນທີສາມຂອງການທົບທວນສະຖານະການສິດທິມະນຸດຂອງປະເທດໄທ (Universal Periodic Review ຫຼື UPR) ໃນປີ 2021, ລັດຖະບານໄທ "ໄດ້ສະໜັບສະໜູນ" ຢ່າງໜ້ອຍຂໍ້ສະເໜີ 6 ຂໍ້ ກ່ຽວກັບການປົກປ້ອງນັກປົກປ້ອງສິດທິມະນຸດເຊັ່ນ: "ຮັບປະກັນໃຫ້ມີການປົກປ້ອງນັກປົກປ້ອງສິດທິມະນຸດ, ໂດຍຜ່ານການສືບສວນຢ່າງທັນການ ແລະ ລະອຽດກ່ຽວກັບການໂຈມຕີ"; "ດຳເນີນຂັ້ນຕອນເພີ່ມເຕີມເພື່ອຮັບປະກັນໃຫ້ມີສະພາບແວດລ້ອມທີ່ປອດໄພ ແລະ ອຳນວຍຄວາມສະດວກໃຫ້ແກ່ນັກປົກປ້ອງສິດທິມະນຸດ, ຍຸຕິການຂົ່ມເຫັງ, ຄວາມຮຸນແຮງ ແລະ ການຂົ່ມຂູ່ຕໍ່ພວກເຂົາທຸກຮູບແບບ ແລະ ຮັບປະກັນໃຫ້ມີການສືບສວນຢ່າງທັນການ, ໂປ່ງໃສ ແລະ ເປັນເອກະລາດ ເມື່ອມີລາຍງານເກີດເຫດໃນທຸກກໍລະນີ" ແລະ "ສ້າງສະພາບແວດລ້ອມທີ່ປອດໄພ ແລະ ສາມາດໃຊ້ສິດໃນການໂຮມຊຸມນຸມໂດຍສັນຕິພາບ ແລະ ສິດເສລີໃນການສະແດງອອກ ແລະ ປ້ອງກັນການໂຈມຕີທຳຮ້າຍ ແລະ ການຂົ່ມຂູ່ຕໍ່ຜູ້ປົກປ້ອງສິດທິມະນຸດ."[10]

ໃນອີກດ້ານໜຶ່ງ, ລັດຖະບານລາວກໍຍັງໄດ້ຮັບຂໍ້ສະເໜີທີ່ຄ້າຍຄືກັນ ໃນລະຫວ່າງຂະບວນການ UPR ໃນປີ 2020 ລວມທັງການ "ເສີມຂະຫຍາຍສິດເສລີພາບໃນການສະແດງອອກ, ຍົກເລີກການຈຳກັດສື່ມວນຊົນອິດສະຫຼະ ແລະ ການສ້າງສະພາບແວດລ້ອມທີ່ ປອດໄພໃຫ້ແກ່ການດຳເນີນວຽກງານຂອງນັກຂ່າວ ແລະ ນັກປົກປ້ອງສິດທິມະນຸດ"; "ຮັບປະກັນໃຫ້ມີສິດເສລີພາບໃນການສະແດງອອກ, ການຮວມຕົວ ແລະ ການຊຸມນຸມໂດຍສັນຕິຢ່າງເຕັມທີ່ ແລະ ດຳເນີນການການສືບສວນຢ່າງເຕັມທີ່ຕາມທຸກຂໍ້ກ່າວຫາກ່ຽວກັບການຈັບກຸມຕາມອຳເພີໃຈ, ການອຸ້ມຫາຍ ແລະ ການຕັດສິນລົງໂທດ

---

[9] ສຳນັກງານຂ້າຫຼວງໃຫຍ່ສຳລັບສິດທິມະນຸດແຫ່ງສະຫະປະຊາຊາດ, ສົນທິສັນຍາມິນີໂຊຕາວ່າດ້ວຍການສືບສວນກໍລະນີສົງໄສວ່າເປັນການເສຍຊີວິດທີ່ບໍ່ຊອບທຳທາງກົດໝາຍ, 2017, ohchr.org/sites/default/files/Documents/Publications/MinnesotaProtocol.pdf

[10] ສະພາສິດທິມະນຸດຂອງອົງການສະຫະປະຊາຊາດ, ລາຍງານຈາກຄະນະເຮັດວຽກກ່ຽວກັບການທົບທວນສະຖານະການສິດທິມະນຸດ: ປະເທດໄທ, ຂໍ້ສະເໜີຈາກປະເທດບໍເວ, ເຊັກເກຍ ແລະ ອີຕາລີ ຕາມລຳດັບ, A/HRC/49/17/Add.1, Para 19 and 51. ohchr.org/sites/default/files/2022-03/A_HRC_49_17_Add.1_AV_Thailand_E.docx

ທາງອາຍາ ເນື່ອງຈາກການສະແດງການຄັດຄ້ານທາງການເມືອງ ຫຼື ການວິພາກວິຈານນະໂຍບາຍຂອງລັດ" ແລະ "ດຳເນີນການສືບສວນຢ່າງເປັນເອກະລາດໃນປະເທດ ກ່ຽວກັບການສູນຫາຍ ແລະ ການເສຍຊີວິດຂອງນັກກິດຈະກຳເພື່ອປະຊາທິປະໄຕ ແລະ ນັກເຄື່ອນໄຫວສິດທິມະນຸດ." ມັນເປັນສິ່ງທີ່ໜ້າເສຍໃຈທີ່ລັດຖະບານລາວປະຕິເສດການຮັບເອົາຂໍ້ສະເໜີເຫຼົ່ານີ້ສ່ວນໃຫຍ່ ຈາກການທົບທວນ.[11]

ຈຳນວນຄະດີປາບປາມຂ້າມຊາດທີ່ເພີ່ມຂຶ້ນ, ລວມທັງການສັງຫານ ບຸນສ່ວນ ທີ່ເກີດຂຶ້ນບໍ່ດົນມານີ້, ສະທ້ອນໃຫ້ເຫັນວ່າລັດຖະບານທັງສອງປະເທດບໍ່ໄດ້ປະຕິບັດພັນທະດ້ານສິດທິມະນຸດຂອງພວກເຂົາຢ່າງມີປະສິດທິຜົນ ໃນດ້ານການຮັບປະກັນໃຫ້ຜູ້ປົກປ້ອງສິດທິມະນຸດສາມາດໃຊ້ສິດທິມະນຸດ ແລະ ສິດເສລີພາບຂັ້ນພື້ນຖານຂອງພວກເຂົາໄດ້ຢ່າງປອດໄພໃນທັງສອງປະເທດ.

## ຂໍ້ຮຽກຮ້ອງຕໍ່ລັດຖະບານໄທ, ລັດຖະບານລາວ ແລະ ປະຊາຄົມສາກົນ

ເພື່ອຕອບສະໜອງກັບສະພາບການທີ່ໄດ້ກ່າວມາຂ້າງເທິງນີ້, ບັນດາອົງການທີ່ໄດ້ລົງນາມຮຽກຮ້ອງຢ່າງຮີບດ່ວນດັ່ງຕໍ່ໄປນີ້ວ່າ:

### ສຳລັບລັດຖະບານລາວ ແລະ ໄທ

- ໃຫ້ດຳເນີນການສືບສວນທັນທີ, ລະອຽດຄົບຖ້ວນ, ມີປະສິດຕິຜົນ, ຍຸຕິທຳ ແລະ ເປັນເອກະລາດ ຕໍ່ການສັງຫານ ບຸນສ່ວນ ແລະ ເຫດການລະເມີດ ແລະ ການກົດຂີ່ສິດທິມະນຸດອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນຖະແຫຼງການສະບັບນີ້, ໃຫ້ສອດຄ່ອງກັບກົດໝາຍ ແລະ ມາດຕະຖານສິດທິມະນຸດສາກົນ, ລວມທັງອະນຸສັນຍາມິນິໂຊຕາວ່າດ້ວຍການສືບສວນກໍລະນີທີ່ສົງໄສວ່າເປັນການເສຍຊີວິດແບບບໍ່ຊອບທຳທາງກົດໝາຍ;

- ຮັບປະກັນວ່າການສືບສວນຈະນຳໄປສູ່ຄວາມຮັບຜິດຊອບຕໍ່ອາຊະຍາກຳເຫຼົ່ານີ້, ໂດຍການຈັບຕົວ, ດຳເນີນຄະດີ ແລະ ລົງໂທດບຸກຄົນທີ່ມີສ່ວນຮັບຜິດຊອບ;

- ໃຫ້ສະໜອງການເຂົ້າເຖິງການຟື້ນຟູ ແລະ ການຊົດເຊີຍສຳລັບຄອບຄົວ ແລະ ບຸກຄົນທີ່ເປັນທີ່ຮັກ ທີ່ໄດ້ຮັບຜົນກະທົບຈາກອາຊະຍາກຳເຫຼົ່ານີ້ ຢ່າງມີປະສິດທິພາບ;

- ໃຫ້ຄຳໝັ້ນສັນຍາຕໍ່ສາທາລະນະວ່າຈະປ້ອງກັນບໍ່ໃຫ້ມີການປະຫັດປະຫານ, ການຂົ່ມຂູ່ ແລະ ການຄຸກຄາມເພີ່ມ, ສ້າງສະພາບແວດລ້ອມທີ່ປອດໄພ, ມີຄວາມເຄົາລົບ ແລະ ເຮັດໃຫ້ຜູ້ປົກປ້ອງສິດທິມະນຸດທຸກຄົນ ແລະ ຍຸຕິການກະທຳຜິດທາງອາຍາຕໍ່ສິດເສລີໃນການສະແດງອອກ, ການໂຮມຊຸມນຸມ ແລະ ການຮວມຕົວໂດຍສັນຕິ;

- ຍົກເລີກຂໍ້ຕົກລົງຢ່າງເປັນທາງການດັ່ງກ່າວຢ່າງເລັ່ງດ່ວນ ລະຫວ່າງລັດຖະບານທັງສອງປະເທດ ແລະ ມາດຕະການອື່ນໆທີ່ສາມາດເຮັດໃຫ້ເກີດການປາບປາມຂ້າມຊາດຕໍ່ການເຄື່ອນໄຫວດ້ານສິດທິມະນຸດທີ່ຖືກຕ້ອງຕາມກົດໝາຍ;

---

[11] ສະພາສິດທິມະນຸດຂອງອົງການສະຫະປະຊາຊາດ, ລາຍງານຈາກຄະນະເຮັດວຽກກ່ຽວກັບການທົບທວນສະຖານະການສິດທິມະນຸດ: ປະເທດໄທ, ຂໍ້ສະເໜີຈາກປະເທດນໍເວ, ເຊັກເກຍ ແລະ ສະຫະລັດອາເມຣິກາ, A/HRC/44/6/Add.1, Para.6. undocs.org/A/HRC/44/6/Add.1

**ສຳລັບປະຊາຄົມນັກການທູດໃນປະເທດລາວ ແລະ ໄທ ແລະ ຜູ້ໃຫ້ທຶນ**

- ຮຽກຮ້ອງໃຫ້ມີຄວາມຮັບຜິດຊອບຢ່າງວ່ອງໄວ ແລະ ມີປະສິດທິຜົນ ແລະ ຍຸຕິການລະເມີດສິດທິມະນຸດ ທີ່ມີປົກປິດຢູ່ພາຍໃຕ້ວັດທະນະທຳຂອງການບໍ່ຕ້ອງຮັບໂທດໃນທັງສອງປະເທດ ເປັນເວລາຍາວນານ;

- ສຳລັບລັດຖະບານທີ່ກ່ຽວຂ້ອງກັບການເຈລະຈາລະຫວ່າງລັດຖະບານກັບທາງການລາວ ແລະ ໄທ, ໃຫ້ຍົກບັນຫາການປາບປາມຂ້າມຊາດທີ່ຕໍ່ຕ້ານນັກປົກປ້ອງສິດທິມະນຸດຂອງທັງສອງປະເທດຂຶ້ນມາໂອ້ລົມປຶກສາຫາລື ແລະ ຮັບປະກັນວ່າຈະເປີດເຜີຍໃຫ້ຜົນໄດ້ຮັບຂອງການເຈລະຈາດັ່ງກ່າວຕໍ່ສາທາລະນະ;

**ສຳລັບໜ່ວຍງານພາຍໃຕ້ອົງການສະຫະປະຊາຊາດ**

- ຮັບປະກັນໃຫ້ມີການປົກປ້ອງຜູ້ລີ້ໄພ ແລະ ຜູ້ຂໍລີ້ໄພ ທີ່ຕ້ອງໃຊ້ຊີວິດຢູ່ພາຍໃຕ້ຄວາມຢ້ານກົວຂອງການປາບປາມຂ້າມຊາດ ແລະ ສ້າງຄວາມສະດວກໃນການດຳເນີນການພິຈາລະນາການຂໍລີ້ໄພເພື່ອຍົກຍ້າຍໄປຢູ່ປະເທດທີສາມຢ່າງທັນທີ.

**ລາຍຊື່ຂອງອົງການທີ່ຮ່ວມລົງນາມໃນຖະແຫຼງການ**

1. ອົງການເອັມເນສຕີ້ ອິນເຕີເນຊັ່ນນອລ (Amnesty International)
2. Human Rights Watch
3. International Commission of Jurists
4. International Federation for Human Rights
5. Manushya Foundation
6. Focus on the Global South
7. CIVICUS: World Alliance for Citizen Participation
8. Front Line Defenders
9. Asia- Europe Peoples Forum (AEPF)
10. Fresh Eyes

**ຂໍ້ມູນສຳລັບການຕິດຕໍ່**

ຖ້າຫາກຕ້ອງການຂໍ້ມູນເພີ່ມເຕີມ ກະລຸນາຕິດຕໍ່ຫາອີເມວ ESEAPRO@AMNESTY.ORG